




# COVID-19 News

18 ມ.ນ

18 ມ.ນ

ໃບແຈ້ງການ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ
ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19

ເລກທີ 003 /ສພກ
ນະຄອນຫຼວງວຽງຈັນ, ວັນທີ 02 MAR 2020

**ໜັງສືແຈ້ງການ**

**ຮຽນ:** ທ່ານ ລັດຖະມົນຕີ, ຫົວໜ້າອົງການ, ສຳນັກງານທັງພາກລັດ ແລະ ເອກະຊົນທີ່ນັບຖື.
**ເລື່ອງ:** ພິຈາລະນາການເລື່ອນ ຫຼື ໂຈະການໄປປະຕິບັດວຽກງານຂອງພະນັກງານລັດຖະກອນຢູ່ປະເທດທີ່ມີການລະບາດຂອງພະຍາດ COVID-19.

- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 03/02/2020 ວ່າດ້ວຍການແຕ່ງຕັ້ງ ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19);
- ອີງຕາມ ການຕົກລົງເປັນເອກະພາບໃນກອງປະຊຸມຫ້ອງປະຕິບັດງານເຫດການສຸກເສີນທາງດ້ານສາທາລະນະສຸກ ປະຈຳວັນທີ ;2020 ກຸມພາ 29
- ອີງຕາມ ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ທີ່ກຳລັງລະບາດໃນພາກພື້ນ ແລະ ແຜ່ຂະຫຍາຍຫຼາຍປະເທດໃນໂລກ.

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ແຈ້ງມາຍັງທ່ານຊາບວ່າ: ປະຈຸບັນ ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໃນຫຼາຍປະເທດ ໄດ້ຂະຫຍາຍເປັນວົງກວ້າງ, ສືບຕໍ່ມີກໍລະນີຕິດເຊື້ອ ແລະ ເສຍຊີວິດເພີ່ມຂຶ້ນໃນແຕ່ລະວັນ. ອົງການອະນາໄມໂລກໄດ້ປະເມີນວ່າພະຍາດ COVID-19 ແມ່ນມີຄວາມສ່ຽງສູງສຸດທີ່ຈະແຜ່ລະບາດໄປທົ່ວໂລກ. ການເດີນທາງໄປປະເທດທີ່ມີການລາຍງານການລະບາດ ມີຄວາມສ່ຽງສູງໃນການຕິດເຊື້ອ ແລະ ນຳມາແຜ່ລະບາດໃນປະເທດຂອງພວກເຮົາ ຍ້ອນວ່າປະຈຸບັນນີ້ ສປປ ລາວ ຍັງບໍ່ມີກໍລະນີຜູ້ຕິດເຊື້ອ.

ສະນັ້ນ, ຈຶ່ງສະເໜີມາຍັງບັນດາທ່ານເພື່ອພິຈາລະນາ ການອະນຸມັດໃຫ້ພະນັກງານເດີນທາງໄປປະຕິບັດງານຢູ່ໃນບັນດາປະເທດທີ່ມີການລະບາດຂອງພະຍາດ COVID-19. ຖ້າມີຄວາມຈຳເປັນແທ້ ກໍ່ຕ້ອງປະຕິບັດມາດຕະການເຝົ້າລະວັງ ແລະ ກັນການຕິດເຊື້ອ ຕາມການແນະນຳຂອງປະເທດເຈົ້າພາບຢ່າງເຂັ້ມງວດ ໂດຍສະເພາະການປ້ອງກັນຕົນເອງບໍ່ໃຫ້ຕິດເຊື້ອ.

ກໍລະນີ ຖ້າພະນັກງານໄດ້ໄປເຄື່ອນໄຫວວຽກງານ ແລະ ກັບມາຈາກປະເທດທີ່ມີການລະບາດຂອງພະຍາດ COVID-19 ແມ່ນໃຫ້ປະຕິບັດຕາມຂໍ້ແນະນຳ ທີ່ກະຊວງສາທາລະນະສຸກໄດ້ວາງອອກຢ່າງເຄັ່ງຄັດ.

ໝາຍເຫດ: ສຳຫຼັບຂໍ້ມູນລາຍລະອຽດ ແມ່ນໃຫ້ເບິ່ງຕາມຂໍ້ແນະນຳທີ່ຕິດຂັດມາພ້ອມເອກະສານແຈ້ງການສະບັບນີ້.
ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຮັບຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ
ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19
ຫົວໜ້າກອງເລຂາ

ຮສ.ດຣ.ພູທອນ ເມືອງປາກ

18 ມ.ນ

18 ມ.ນ

ສະພາບການໃນປະຈຸບັນໃນທົ່ວໂລກ

ປະຈຸບັນ, ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນ ໃໝ່ (COVID-19) ໃນຫຼາຍປະເທດ ໄດ້ຂະຫຍາຍເປັນວົງກວ້າງ ມາຮອດເວລາ 24:00 ໂມງເຊົ້າ ຂອງວັນທີ 16 ມີນາ 2020, ທົ່ວໂລກມີລາຍງານກໍລະນີທັງໝົດ 158 ປະເທດ, ກໍລະນີຢັ້ງຢືນຜູ້ຕິດເຊື້ອພະຍາດ COVID-19 ແລ້ວ 182,412 ກໍລະນີ (ເພີ່ມຂຶ້ນ 13,151 ກໍລະນີ ເກືອບທັງໝົດກໍລະນີໃໝ່ ແມ່ນຢູ່ນອກ ສປ ຈີນ), ເສຍຊີວິດ 7,157 (ເພີ່ມຂຶ້ນ 658 ກໍລະນີ) ກໍລະນີ ແລະ ປິ່ນປົວຫາຍດີ 79,211 (ເພີ່ມຂຶ້ນ 2,593).

ສຳລັບ ສປປ ລາວ ແມ່ນມີກໍລະນີສົງໄສສະສົມ ທີ່ໄດ້ເກັບຕົວຢ່າງມາກວດທັງໝົດ 85 ກໍລະນີ ແລະ 81 ກໍລະນີກວດບໍ່ເຊື້ອພົບພະຍາດ, ຍັງລໍຖ້າຜົນກວດ 04 ກໍລະນີ ແລະ ຈະແຈ້ງຜົນກວດໃຫ້ບັນດາທ່ານຮັບຊາບອີກຄັ້ງພາຍຫຼັງໄດ້ຮັບຜົນກວດ

FaLang translation system by Faboba